ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ..0162..../ກປ

ນະຄອນຫຼວງວຽງຈັນ, ວັນທີ 01.. ກຸມພາ 2017

# ຄໍາແນະນໍາ

## ກ່ຽວກັບການຈັດຕັ້ງປະຕິບັດວຽກງານສຸຂານາໄມ ແລະ ສຸຂານາໄມພືດ ພາຍໃຕ້ສັນຍາການຄ້າຊາຍແດນ ລະຫວ່າງ ລັດຖະບານ ແຫ່ງ ສປປ ລາວ ແລະ ລັດຖະບານ ແຫ່ງ ສສ ຫວຽດນາມ

ເຖິງ: - ທ່ານ ຫົວໜ້າກົມປູກຝັງ;

- ທ່ານ ຫົວໜ້າກົມລ້ຽງສັດ ແລະການປະມົງ;
- ທ່ານ ຫົວໜ້າພະແນກກະສິກຳ ແລະປ່າໄມ້ປະຈຳແຂວງຜົ້ງສາລີ, ຫຼວງພະບາງ, ຫົວພັນ, ຊຽງຂວາງ, ບໍລິຄຳໄຊ, ຄຳມ່ວນ, ສະຫວັນນະເຂດ, ສາລະວັນ, ເຊກອງ ແລະແຂວງອັດຕະປື.

- ອີງຕາມ ກົດໝາຍວ່າດ້ວຍປ້ອງກັນພືດ ເລກທີ 06/ສພຊ, ລົງວັນທີ 9 ທັນວາ 2008;
- ອີງຕາມ ກົດໝາຍວ່າດ້ວຍການລ້ຽງສັດ ແລະການສັດຕະວະແພດ ເລກທີ 03/ສພຊ, ລົງວັນທີ 25 ກໍລະກົດ 2008;
- ອີງຕາມ ສັນຍາການຄ້າ ລະຫວ່າງ ລັດຖະບານ ແຫ່ງ ສປປ ລາວ ແລະ ລັດຖະບານ ແຫ່ງ ສສ ຫວຽດນາມ, ສະບັບລົງວັນທີ 27 ມິຖຸນາ 2015;
- ອີງຕາມສັນຍາ ແລະ ສົນທິສັນຍາສາກົນທີ່ ສປປ ລາວ ເປັນພາຄີ.

ເພື່ອຄວາມເປັນເອກະພາບໃນການປະຕິບັດສັນຍາການຄ້າຊາຍແດນ ລະຫວ່າງ ລັດຖະບານ ແຫ່ງ ສປປ ລາວ ແລະ ລັດຖະບານ ແຫ່ງ ສສ ຫວຽດນາມ ເກີດຜົນປະໂຫຍດສູງສຸດ ແກ່ປະຊາຊົນຂອງສອງປະເທດ ໄດ້ມີການຄ້າຂາຍ, ແລກປ່ຽນສິນຄ້າ ພືດ, ຜະລິດຕະພັນພືດ, ສັດ ແລະຜະລິດຕະພັນສັດ ຕາມຊາຍແດນ ມີຄວາມສະດວກ, ປະຕິບັດຕາມກົດໝາຍ ແລະລະບຽບການ ຂອງສອງປະເທດ ລວມທັງສັນຍາ ແລະສົນທິສັນຍາສາກົນທີ່ ສປປ ລາວ ເປັນພາຄີ, ປະກອບສ່ວນພັດທະນາເສດຖະກິດ - ສັງຄົມຂອງສອງປະເທດ ໂດຍສະເພາະແມ່ນບັນດາເມືອງ, ແຂວງທີ່ມີຊາຍແດນຕິດຈອດກັນ ລະຫວ່າງ ສປປ ລາວ ແລະ ສສ ຫວຽດນາມ

## ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ອອກຄໍາແນະນໍາ:

**1. ຈຸດປະສົງ:**

ເພື່ອແນະນຳເຕັກນິກວິຊາການ ໃນການປະຕິບັດວຽກງານສຸຂານາໄມ ແລະສຸຂານາໄມພືດ ພາຍໃຕ້ສັນຍາການຄ້າຊາຍແດນ ລະຫວ່າງ ລັດຖະບານ ແຫ່ງ ສປປ ລາວ ແລະ ລັດຖະບານ ແຫ່ງ ສສ ຫວຽດນາມ ແນໃສ່

ເພີ່ມມູນຄ່າການຄ້າ-ຂາຍຮ່ວມກັນໃຫ້ສູງຂຶ້ນ, ສ້າງໃຫ້ເຂດຊາຍແດນລາວ-ຫວຽດນາມ ກາຍເປັນຊາຍແດນແຫ່ງການແລກປ່ຽນຊື້-ຂາຍ, ມີຄວາມສະຫງົບ, ໝັ້ນຄົງ, ມີດຕະພາບ, ການຮ່ວມມື ແລະພັດທະນາ ແບບຍືນຍົງ.

**2. ຂອບເຂດການຈັດຕັ້ງປະຕິບັດ:**

– ການຈັດຕັ້ງປະຕິບັດວຽກງານສຸຂານາໄມ ແລະສຸຂານາໄມພືດ ພາຍໃຕ້ສັນຍາການຄ້າຊາຍແດນ ລະຫວ່າງ ສປປ ລາວ ແລະ ສສ ຫວຽດນາມ ຢູ່ພາຍໃນ ສປປ ລາວ ກວມເອົາ 10 ແຂວງ, 21 ເມືອງ ດັ່ງນີ້:

1) **ແຂວງຜົ້ງສາລີ** ມີ 02 ເມືອງ ຄື: ເມືອງໃໝ່ ແລະເມືອງຍອດອູ;

2) **ແຂວງຫົວພັນ** ມີ 06 ເມືອງ ຄື: ເມືອງແອດ, ຊຽງຄໍ້, ສົບເບົາ, ວຽງໄຊ ແລະເມືອງຊໍາໃຕ້;

3) **ແຂວງຊຽງຂວາງ** ມີ 02 ເມືອງ ຄື: ເມືອງໝອກ ແລະເມືອງໜອງແຮດ;

4) **ແຂວງຫຼວງພະບາງ** ມີ 01 ເມືອງ ຄື: ເມືອງໂພນທອງ;

5) **ແຂວງບໍລິຄໍາໄຊ** ມີ 02 ເມືອງ ຄື: ເມືອງໄຊຈໍາພອນ ແລະເມືອງຄໍາເກີດ;

6) **ແຂວງຄໍາມ່ວນ** ມີ 03 ເມືອງ ຄື: ເມືອງນາກາຍ, ຍົມມະລາດ ແລະເມືອງບົວລະພາ;

7) **ແຂວງສະຫວັນນະເຂດ** ມີ 02 ເມືອງ ຄື: ເມືອງເຊໂປນ ແລະເມືອງນອງ;

8) **ແຂວງສາລະວັນ** ມີ 01 ເມືອງ ຄື: ເມືອງສະມ້ວຍ;

9) **ແຂວງເຊກອງ** ມີ 01 ເມືອງ ຄື: ເມືອງດາກຈຶງ;

10) **ແຂວງອັດຕະປື** ມີ 02 ເມືອງ ຄື: ເມືອງສານໄຊ ແລະເມືອງພູວົງ.

– ສໍາລັບ ດ່ານກັກກັນພືດສາກົນ, ທ້ອງຖິ່ນ ແລະ ປະເພນີ ທີ່ອະນຸຍາດໃຫ້ນໍາເຂົ້າ ແລະ ສົ່ງອອກ ສິນຄ້າພືດ ແລະ ຜະລິດຕະພັນພືດ ຕາມເງື່ອນໄຂ ແລະ ສິດທິພິເສດ ທີ່ໄດ້ກໍານົດໄວ້ໃນຂໍ້ 3.1, 3.2, 3.3 ຂອງຄໍາແນະນໍາສະບັບນີ້ ມີດັ່ງນີ້:

1) **ແຂວງຜົ້ງສາລີ** ມີ 03 ດ່ານ ຄື: ດ່ານປາງຫົກ, ດ່ານປາງເຫີມ ແລະ ດ່ານຫ້ວຍລ້າ;

2) **ແຂວງຫົວພັນ** ມີ 15 ດ່ານ ຄື: ດ່ານນ້ຳໂສຍ, ດ່ານປ່າຮາງ, ດ່ານບ້ານດ່ານ, ດ່ານສົມຫວັງ, ດ່ານສົບດຸ້ງ, ດ່ານກະລັງ, ດ່ານທ່າເລົ່າ, ດ່ານຍອດຕື້ອ, ດ່ານມອງນ້ຳ, ດ່ານບ້ານບໍ່, ດ່ານນາເຊົາ, ດ້ານຫ້ວຍໝົ້, ດ່ານພຽງສາ, ດ່ານນ້ຳໄຕ້ ແລະ ດ່ານທ່າດໍ;

3) **ແຂວງຊຽງຂວາງ** ມີ 02 ດ່ານ ຄື: ດ່ານນ້ຳກັ່ນ ແລະ ດ່ານທ່າດໍ;

4) **ແຂວງຫຼວງພະບາງ** ມີ 01 ດ່ານ ຄື: ດ່ານນາຊອນ (30);

5) **ແຂວງບໍລິຄໍາໄຊ** ມີ 03 ດ່ານ ຄື: ດ່ານ ນ້ຳພາວ (505), ດ່ານໂພນເມືອງ ແລະ ດ່ານນ້ຳຍ້ອນ;

6) **ແຂວງຄໍາມ່ວນ** ມີ 03 ດ່ານ ຄື: ດ່ານນາເພົ້າ, ດ່ານໜາກກາ ແລະ ດ່ານໜອງມ້າ;

7) **ແຂວງສະຫວັນນະເຂດ** ມີ 02 ດ່ານ ຄື: ດ່ານແດນສະຫວັນ ແລະ ດ່ານລະຫ່າງ;

8) **ແຂວງສາລະວັນ** ມີ 01 ດ່ານ ຄື: ດ່ານ ລະໄລ (71);

9) **ແຂວງເຊກອງ** ມີ 04 ດ່ານ ຄື: ດ່ານດາກຕາອອກ, ດ່ານດາກປາ, ດ່ານຈະນຶກ ແລະ ດ່ານຕະວາງ;

10) **ແຂວງອັດຕະປື** ມີ 01 ດ່ານ ຄື: ດ່ານພູເກືອ, ດ່ານວັງຕັດ ແລະ ດ່ານພູຍາງ.

**3. ເນື້ອໃນຂອງສັນຍາທີ່ກ່ຽວພັນກັບຂະແໜງການກະສິກໍາ ແລະ ປ່າໄມ້:**

ສັນຍາການຄ້າຊາຍແດນ ລະຫວ່າງ ລັດຖະບານ ແຫ່ງ ສປປ ລາວ ແລະ ລັດຖະບານ ແຫ່ງ ສສ ຫວຽດນາມ ແມ່ນສັນຍາທີ່ ສສ ຫວຽດນາມ ໃຫ້ສິດພິເສດດ້ານການຄ້າແບບຝ່າຍດຽວ ແກ່ ສປປ ລາວ ຊຶ່ງມີເນື້ອໃນແຕກຕ່າງຈາກສັນຍາການຄ້າສອງຝ່າຍ ທີ່ເຊັນກັນໃນວັນທີ 03 ມີນາ 2015 ທີ່ນະຄອນຫຼວງວຽງຈັນ ເພາະເປັນສັນຍາແບບຕອບແທນເຊິ່ງກັນ ແລະກັນ. ຂໍ້ຜູກພັນທີ່ ສສ ຫວຽດນາມ ໃຫ້ສິດທິພິເສດແກ່ ສປປ ລາວ ປະກອບດ້ວຍ ສາມ ລະດັບ ຊຶ່ງຕິດພັນກັບວຽກງານສຸຂານາໄມ ແລະສຸຂານາໄມພືດ ດັ່ງນີ້:

**3.1. ສິດທິພິເສດແກ່ເມືອງທີ່ມີຊາຍແດນຕິດຈອດລະຫວ່າງກັນ ຫຼືລະດັບເມືອງຊາຍແດນ:**

ພືດ, ຜະລິດຕະພັນພືດ, ສັດ ແລະຜະລິດຕະພັນສັດ ທີ່ປູກ ຫຼືລ້ຽງໂດຍປະຊາຊົນຢູ່ເມືອງຊາຍແດນຂອງ ສປປ ລາວ ທີ່ໄດ້ຜ່ານການກວດກາ, ຢັ້ງຢືນສຸຂານາໄມ ແລະສຸຂານາໄມພືດ ຈາກເຈົ້າໜ້າທີ່ກ່ຽວຂ້ອງຂອງ ສປປ ລາວ ຕ້ອງໄດ້ຮັບການຍົກເວັ້ນພາສີນໍາເຂົ້າ ແລະອາກອນອື່ນໃນເວລານໍາເຂົ້າ ສສ ຫວຽດນາມ ໂດຍບໍ່ຕ້ອງຂໍໃບອະນຸຍາດນໍາເຂົ້າ, ບໍ່ຕ້ອງຜ່ານການກວດກາດ້ານສຸຂານາໄມ ແລະສຸຂານາໄມພືດ, ມາດຕະການເຕັກນິກ ແລະກວດກາຄວາມປອດໄພດ້ານອາຫານ ຈາກເຈົ້າໜ້າທີ່ກ່ຽວຂ້ອງຂອງ ສສ ຫວຽດນາມ, ຍົກເວັ້ນກໍລະນີທີ່ມີການແຈ້ງເຕືອນຂອງເຈົ້າໜ້າທີ່ຝ່າຍ ໃດຝ່າຍໜຶ່ງ ກ່ຽວກັບຄວາມສ່ຽງຂອງສິນຄ້າທີ່ຈະສ້າງຄວາມເສຍຫາຍແກ່ພືດ, ຄົນ, ສັດ ແລະສິ່ງແວດລ້ອມ.

**3.2. ສິດທິພິເສດແກ່ແຂວງທີ່ມີຊາຍແດນຕິດຈອດລະຫວ່າງກັນ ຫຼືລະດັບແຂວງຊາຍແດນ:**

– ສິນຄ້າ ພືດ, ຜະລິດຕະພັນພືດ, ສັດ ແລະຜະລິດຕະພັນສັດ ທີ່ຜະລິດ ແລະຍັງບໍ່ທັນປຸງແຕ່ງ ລວມທັງພືດ, ສັດທີ່ເປັນສິນຄ້າ ຊຶ່ງປູກ ຫຼືລ້ຽງໂດຍປະຊາຊົນ, ນັກທຸລະກິດ ທີ່ອາໄສຢູ່ແຂວງຊາຍແດນຂອງ ສປປ ລາວ ພາຍໃຕ້ການລົງທຶນ ຂອງນັກລົງທຶນຫວຽດນາມ ໂດຍສອດຄ່ອງກັບກົດໝາຍ ແລະລະບຽບການຂອງແຕ່ລະຝ່າຍ ຕ້ອງໄດ້ຮັບການຍົກເວັ້ນພາສີນໍາເຂົ້າ ແລະອາກອນມູນຄ່າເພີ່ມ ເມື່ອເວລານໍາເຂົ້າ ສສ ຫວຽດນາມ;

– ສິນຄ້າ ພືດ, ຜະລິດຕະພັນພືດ, ສັດ ແລະຜະລິດຕະພັນສັດ ທີ່ປູກ ຫຼືລ້ຽງໂດຍປະຊາຊົນຢູ່ເມືອງຊາຍແດນຂອງ ສປປ ລາວ ແລະ ນັກທຸລະກິດ ທີ່ໄດ້ຂຶ້ນທະບຽນດໍາເນີນທຸລະກິດກະສິກໍາ ແລະປ່າໄມ້ ຢູ່ແຂວງຊາຍແດນຂອງ ສປປ ລາວ ພາຍໃຕ້ການລົງທຶນຂອງນັກລົງທຶນຫວຽດນາມ ທີ່ສອດຄ່ອງກັບກົດໝາຍ ແລະລະບຽບການຂອງແຕ່ລະຝ່າຍແລ້ວ ຕ້ອງໄດ້ຮັບການຍົກເວັ້ນພາສີນໍາເຂົ້າຈາກ ສສ ຫວຽດນາມ;

– ສິນຄ້າ ພືດ, ຜະລິດຕະພັນພືດ, ສັດ ແລະຜະລິດຕະພັນສັດ ທີ່ຜະລິດເປັນສິນຄ້າ ຊຶ່ງປູກ ຫຼືລ້ຽງໂດຍປະຊາຊົນ ແລະ ນັກທຸລະກິດ ທີ່ອາໄສຢູ່ແຂວງຊາຍແດນຂອງ ສປປ ລາວ ພາຍໃຕ້ການລົງທຶນຂອງນັກລົງທຶນຫວຽດນາມ ໂດຍສອດຄ່ອງກັບກົດໝາຍ ແລະລະບຽບການຂອງແຕ່ລະຝ່າຍ ຕ້ອງບໍ່ມີການຈໍາກັດໂກຕາ ແລະການອະນຸຍາດນໍາເຂົ້າອື່ນໆ ເມື່ອນໍາເຂົ້າ ສສ ຫວຽດນາມ.

**3.3. ສິດທິພິເສດແກ່ ສປປ ລາວ ຫຼືລະດັບປະເທດ:**

ສສ ຫວຽດນາມ ໃຫ້ບູລິມະສິດອັດຕາພາສີ 0% ແກ່ສິນຄ້າທີ່ມີແຫຼ່ງກໍາເນີດຈາກ ສປປ ລາວ. ເຈົ້າໜ້າທີ່ການຄ້າຂອງ ສປປ ລາວ ຕ້ອງອອກໃບຢັ້ງຢືນສິນຄ້າ ສໍາລັບສິນຄ້ານໍາເຂົ້າໄປ ສສ ຫວຽດນາມ ຕາມທີ່ໄດ້ກໍານົດໄວ້ໃນເອກະສານຊ້ອນທ້າຍ 01 ທີ່ກວມເອົາສິນຄ້າປະເພດກະສິກໍາ ແຕ່ໝວດທີ 1 ຫາ ໝວດທີ 23, ໝວດທີ 25.01 ແລະ ໝວດທີ 40.01 ທີ່ມີແຫຼ່ງກໍາເນີດຈາກ ສປປ ລາວ ກໍຈະໄດ້ຮັບສິດທິພິເສດທາງອັດຕາພາສີນໍາເຂົ້າ ແລະບໍ່ຈໍາກັດໂກຕານໍາເຂົ້າ ແລະສິ່ງກີດຂວາງອື່ນໆ.

**4. ເງື່ອນໄຂໃນການໄດ້ຮັບສິດທິພິເສດດ້ານການຄ້າ:**

**4.1. ເງື່ອນໄຂທົ່ວໄປ:**

ບຸກຄົນ, ນິຕິບຸກຄົນ ຫຼືການຈັດຕັ້ງ ທີ່ອາໄສຢູ່ເຂດຊາຍແດນ ມີຈຸດປະສົງນໍາໃຊ້ສິດທິພິເສດດ້ານການຄ້າຕາມສັນຍາການຄ້າຊາຍແດນ ລະຫວ່າງ ລັດຖະບານ ແຫ່ງ ສປປ ລາວ ແລະ ລັດຖະບານ ແຫ່ງ ສສ ຫວຽດນາມ ຕ້ອງປະກອບເອກະສານໃຫ້ຄົບຖ້ວນ ດັ່ງນີ້:

– ບັດນໍາໃຊ້ສິດພິເສດດ້ານການຄ້າທີ່ອອກໂດຍຫ້ອງການອຸດສາຫະກໍາ ແລະການຄ້າເມືອງ ຫຼືພະແນກອຸດສາຫະກໍາ ແລະການຄ້າແຂວງຂອງ ສປປ ລາວ;

– ຕ້ອງມີການຢັ້ງຢືນແຫຼ່ງກໍາເນີດສິນຄ້າ ທີ່ຜະລິດ, ປູກ ຫຼືລ້ຽງໂດຍປະຊາຊົນເຂດຊາຍແດນ ຊຶ່ງອອກໃຫ້ໂດຍເຈົ້າໜ້າທີ່ອຸດສາຫະກໍາ ແລະການຄ້າຂອງ ສປປ ລາວ;

– ມີໃບຢັ້ງຢືນສຸຂານາໄມ ແລະສຸຂານາໄມພືດ ພາຍໃຕ້ສັນຍາການຄ້າຊາຍແດນ ລາວ-ຫວຽດນາມ ອອກໂດຍເຈົ້າໜ້າທີ່ ທີ່ກ່ຽວຂ້ອງຂອງຫ້ອງການກະສິກຳ ແລະປ່າໄມ້ເມືອງຊາຍແດນ ທີ່ໄດ້ຮັບການແຕ່ງຕັ້ງ, ມອບໝາຍ ແລະຜ່ານການຝຶກອົບຮົມດ້ານວິຊາການທີ່ກ່ຽວຂ້ອງ.

**4.2. ເງື່ອນໄຂເພີ່ມເຕີມສຳລັບຜູ້ດຳເນີນທຸລະກິດກ່ຽວກັບວຽກງານປູກຝັງ, ການລ້ຽງສັດ, ການລ້ຽງສັດນ້ຳ ແລະການສັດຕະວະແພດ**

**4.2.1. ການດຳເນີນທຸລະກິດ ກ່ຽວກັບວຽກງານປູກຝັງ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:**

– ມີເນື້ອທີ່ປູກຝັງ, ທຶນ, ສຳນັກງານ, ສິ່ງປຸກສ້າງ, ວັດຖຸອຸປະກອນ, ເຄື່ອງມື ແລະພາຫະນະຮັບໃຊ້ຢ່າງເໝາະສົມ;

– ມີນັກວິຊາການທີ່ມີຄວາມຮູ້ດ້ານການປູກຝັງ, ປ້ອງກັນພືດ, ກັກກັນພືດ ລະດັບຊັ້ນກາງຂຶ້ນໄປ ໂດຍມີໃບຢັ້ງຢືນຜ່ານການປະຕິບັດວຽກງານຕົວຈິງ, ສ່ວນທຸລະກິດກ່ຽວກັບການປ້ອງກັນ ແລະກັກກັນພືດ ຕ້ອງມີໃບຢັ້ງຢືນຜ່ານການຝຶກອົບຮົມສະເພາະດ້ານການປູກຝັງ, ປ້ອງກັນພືດ, ກັກກັນພືດ;

– ໄດ້ຮັບການເຫັນດີຈາກຂະແໜງການກະສິກຳ ແລະປ່າໄມ້ ແລະອົງການປົກຄອງທ້ອງຖິ່ນກ່ຽວຂ້ອງ;

– ປະຕິບັດເງື່ອນໄຂທີ່ຈຳເປັນ ຕາມອົງການຄຸ້ມຄອງວຽກງານປ້ອງກັນ ແລະກັກກັນພືດ ກຳນົດໄວ້.

**4.2.2. ການດຳເນີນທຸລະກິດ ກ່ຽວກັບການລ້ຽງສັດ, ການລ້ຽງສັດນ້ຳ ແລະການສັດຕະວະແພດ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:**

– ມີເນື້ອທີ່, ທຶນ, ສຳນັກງານ, ສິ່ງປຸກສ້າງ, ອຸປະກອນ, ເຄື່ອງມື ແລະພາຫະນະຮັບໃຊ້ ຢ່າງເໝາະສົມ;

– ມີນັກວິຊາການທີ່ມີຄວາມຮູ້ດ້ານການລ້ຽງສັດ ລະດັບຊັ້ນກາງຂຶ້ນໄປ ຫຼືວິຊາການສັດຕະວະແພດທີ່ມີໃບຢັ້ງຢືນຜ່ານການປະຕິບັດວຽກງານຕົວຈິງສຳລັບການລ້ຽງສັດ, ສ່ວນທຸລະກິດກ່ຽວກັບການສັດຕະວະແພດນັ້ນ ຕ້ອງໃຫ້ມີສັດຕະວະແພດ ຫຼືພະຍາບານສັດທີ່ມີໃບຢັ້ງຢືນປະກອບວິຊາຊີບ ຈາກສະພາສັດຕະວະແພດ;

– ໄດ້ຮັບການເຫັນດີຈາກຂະແໜງການ ແລະອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;

– ປະຕິບັດເງື່ອນໄຂອື່ນທີ່ຈຳເປັນ ຕາມອົງການຄຸ້ມຄອງວຽກງານລ້ຽງສັດ ແລະສັດຕະວະແພດກຳນົດ.

## 5. ວິທີການ ແລະຂັ້ນຕອນການຂໍໃບຢັ້ງຢືນສຸຂານາໄມ ແລະສຸຂານາໄມພືດ

### 5.1. ວິທີການຂໍໃບຢັ້ງຢືນສຸຂານາໄມພືດ ແລະສຸຂານາໄມພືດ

– ບຸກຄົນ ຫຼືຊາວກະສິກອນຜູ້ຜະລິດ ທີ່ຢູ່ບ້ານຕິດຊາຍແດນ ກັບ ສສ ຫວຽດນາມ ທີ່ເຄີຍຄ້າ-ຂາຍແລກປ່ຽນສິນຄ້າຢູ່ຕາມຊາຍແດນມາແລ້ວ ແລະຜ່ານມາກໍບໍ່ຈຳເປັນມີໃບຢັ້ງຢືນສຸຂານາໄມ ຫຼືສຸຂານາໄມພືດ ກໍບໍ່ຈຳເປັນອອກໃບຢັ້ງຢືນດັ່ງກ່າວໃຫ້ຕື່ມ;

– ສຳລັບ ປະຊາຊົນ, ຊາວກະສິກອນ ທີ່ຕ້ອງການໃບຢັ້ງຢືນສຸຂານາໄມ ຫຼືສຸຂານາໄມພືດ ໃຫ້ຍື່ນຄຳຮ້ອງຕໍ່ຫ້ອງການກະສິກຳ ແລະປ່າໄມ້ເມືອງ ຕາມແບບຟອມທີ່ໄດ້ກຳນົດໄວ້ ພ້ອມດ້ວຍສຳເນົາບັດປະຈຳຕົວ ຫຼືປຶ້ມສຳມະໂນຄົວ ຫຼືບັດນຳໃຊ້ສິດທິພິເສດ ຕາມສັນຍາການຄ້າຊາຍແດນ ລາວ-ຫວຽດນາມ;

– ສ່ວນ ບໍລິສັດ ຫຼືຜູ້ປະກອບການທີ່ດຳເນີນທຸລະກິດກະສິກຳ ແລະປ່າໄມ້ ຢູ່ເມືອງຊາຍແດນຕິດກັບ ສສ ຫວຽດນາມ ທີ່ມີຈຸດປະສົງສົ່ງອອກຊຸດສິນຄ້າ ພືດ, ຜະລິດຕະພັນພືດ, ສັດ ແລະຜະລິດຕະພັນສັດ ໄປຍັງ ສສ ຫວຽດນາມ ໃຫ້ຍື່ນຄຳຮ້ອງຕໍ່ຫ້ອງການກະສິກຳ ແລະປ່າໄມ້ເມືອງກ່ຽວຂ້ອງ ຕາມແບບຟອມທີ່ການົດໄວ້ ພ້ອມດ້ວຍສຳເນົາບັດນຳໃຊ້ສິດທິພິເສດ ຕາມສັນຍາການຄ້າຊາຍແດນ ລາວ-ຫວຽດນາມ ແລະສຳເນົາໃບທະບຽນວິສາຫະກິດ;

– ຜູ້ຈະສົ່ງອອກຊຸດສິນຄ້າ ພືດ, ຜະລິດຕະພັນພືດ, ສັດ ແລະຜະລິດຕະພັນສັດ ໄປຍັງ ສສ ຫວຽດນາມ ຕ້ອງກະກຽມຊຸດສິນຄ້າກ່ຽວກັບພືດ, ຜະລິດຕະພັນພືດ, ສັດ ແລະຜະລິດຕະພັນສັດ ເພື່ອສະເໜີໃຫ້ມີ

ການກວດກາລ່ວງໜ້າ ຢ່າງໜ້ອຍ ສອງວັນ ກ່ອນສົ່ງອອກຕາມຫຼັກການວິຊາການ.

**5.2. ຂັ້ນຕອນ ວິທີການຂໍໃບຢັ້ງຢືນສຸຂານາໄມພືດ ແລະສຸຂານາໄມພືດ**

– ພາຍຫຼັງໄດ້ຮັບໃບຄໍາຮ້ອງແລ້ວ, ພະນັກງານ ຫຼືເຈົ້າໜ້າທີ່ທີ່ຮັບຜິດຊອບວຽກງານສຸຂານາໄມ ແລະສຸຂານາໄມພືດ ຂອງຫ້ອງການກະສິກໍາ ແລະປ່າໄມ້ເມືອງ ຕ້ອງດໍາເນີນການກວດກາເອກະສານຢ່າງໄວວາ, ຖ້າເຫັນວ່າ: ເອກະສານບໍ່ຄົບຖ້ວນ ຫຼືບໍ່ຖືກຕ້ອງ ຕາມທີ່ໄດ້ກໍານົດໄວ້ໃນຂໍ້ 4 ຂອງຄໍາແນະນໍາສະບັບນີ້ ຕ້ອງແນະນໍາໃຫ້ຜູ້ສົ່ງອອກ ປະກອບເອກະສານໃຫ້ຄົບຖ້ວນ. ໃນກໍລະນີເອກະສານດັ່ງກ່າວ ຫາກຖືກຕ້ອງຄົບຖ້ວນແລ້ວ ຕ້ອງດໍາເນີນການກວດກາຄ້າທີ່ສະເໜີຂໍສົ່ງອອກນັ້ນໂດຍໄວ ພ້ອມທັງເຮັດບົດລາຍງານຜົນການກວດກາດ້ານວິຊາການໃຫ້ ຖືກຕ້ອງ ແລະຊັດເຈນ ເພື່ອເປັນບ່ອນອີງໃນການປະກອບເອກະສານສໍາລັບການອອກໃບຢັ້ງຢືນສຸຂານາໄມ ແລະສຸຂານາໄມພືດ ພາຍໃຕ້ສັນຍາການຄ້າຊາຍແດນ ລາວ-ຫວຽດນາມ;

– ຫ້ອງການກະສິກໍາ ແລະປ່າໄມ້ເມືອງ ຕ້ອງມອບໝາຍໃຫ້ພະນັກງານ ຫຼືເຈົ້າໜ້າທີ່ທີ່ໄດ້ຮັບການແຕ່ງຕັ້ງນັ້ນ ຮັບຜິດຊອບ ບັນທຶກ, ເກັບກໍາ ຊຸດສິນຄ້າເຂົ້າ-ອອກໃນແຕ່ລະຄັ້ງແລ້ວ ລາຍງານໃຫ້ຂະແໜງປູກຝັງຫຼືຂະແໜງລ້ຽງສັດ ແລະການປະມົງແຂວງ ປະຈໍາອາທິດ ເພື່ອເປັນຂໍ້ມູນໃຫ້ແກ່ຂັ້ນຂະແໜງການກ່ຽວຂ້ອງຂັ້ນແຂວງ ສະຫຼຸບ, ສັງລວມ ແລະວິໄຈຂໍ້ມູນດັ່ງກ່າວ ລາຍງານໃຫ້ກົມປູກຝັງ ຫຼືກົມລ້ຽງສັດ ແລະການປະມົງ ຕາມຂະແໜງການສາຍຕັ້ງຂອງຕົນ ຮັບຊາບຢ່າງເປັນປົກກະຕິ;

– ສໍາລັບ ການເກັບຄ່າທໍານຽມ ແລະຄ່າບໍລິການວິຊາການ ໃຫ້ປະຕິບັດຕາມລັດຖະບັນຍັດຂອງປະທານປະເທດທີ່ປະກາດໃຊ້ໃນແຕ່ລະໄລຍະ;

– ການນໍາເຂົ້າ ແລະສົ່ງອອກ ຊຸດສິນຄ້າ ພືດ, ຜະລິດຕະພັນພືດ, ສັດ ແລະຜະລິດຕະພັນສັດ ພາຍໃຕ້ສັນຍາການຄ້າຊາຍແດນ ລະຫວ່າງ ສປປ ລາວ ແລະ ສສ ຫວຽດນາມ ອະນຸຍາດໃຫ້ຜ່ານດ່ານກັກກັນພືດ ຕາມທີ່ໄດ້ກໍານົດໄວ້ໃນຂໍ້ 2 ຂອງຄໍາແນະນໍາສະບັບນີ້ເທົ່ານັ້ນ.

**6. ອາຍຸ ແລະຂອບເຂດການນໍາໃຊ້ໃບຢັ້ງຢືນສຸຂານາໄມພືດ:**

– ໃບຢັ້ງຢືນສຸຂານາໄມ ແລະສຸຂານາໄມພືດ ພາຍໃຕ້ສັນຍາການຄ້າຊາຍແດນ ລະຫວ່າງ ສປປ ລາວ ແລະ ສສ ຫວຽດນາມ ມີອາຍຸການນໍາໃຊ້ 07 ວັນ ນັບແຕ່ວັນທີ່ອອກໃຫ້, ສາມາດນໍາໃຊ້ໄດ້ເທື່ອດຽວ ແລະ ນໍາໃຊ້ສະເພາະໃນກອບການຄ້າຊາຍແດນ ລະຫ່ວາງ ສປປ ລາວ ແລະ ສສ ຫວຽດນາມ ເທົ່ານັ້ນ. ກໍລະນີໃບຢັ້ງຢືນສຸຂານາໄມ ແລະສຸຂານາໄມພືດ ໝົດອາຍຸກ່ອນສົ່ງອອກຊຸດສິນຄ້າ ໃຫ້ຜູ້ສົ່ງອອກ ຂໍສະເໜີອອກໃບໃບຢັ້ງຢືນສຸຂານາໄມພືດໃໝ່ ນໍາຫ້ອງການກະສິກໍາ ແລະ ປ່າໄມ້ເມືອງຊາຍແດນ;

– ການອອກໃບຢັ້ງຢືນສຸຂານາໄມ ແລະສຸຂານາໄມພືດ ພາຍໃຕ້ສັນຍາການຄ້າຊາຍ ລະຫວ່າງ ສປປ ລາວ ແລະ ສສ ຫວຽດ ຕ້ອງແມ່ນ ພືດ, ຜະລິດຕະພັນພືດ, ສັດ ຫຼືຜະລິດຕະພັນສັດ ທີ່ເປັນສິນຄ້າ, ປູກ ແລະຜະລິດຢູ່ ສປປ ລາວ ເທົ່ານັ້ນ ຊຶ່ງບໍ່ແມ່ນສິນຄ້າທີ່ນໍາມາຈາກບ່ອນອື່ນທີ່ບໍ່ຢູ່ໃນບ້ານ, ເມືອງ ແລະແຂວງຊາຍແດນ.

**7. ກົນໄກການຢັ້ງຢືນສຸຂານາໄມພືດ:**

ການຢັ້ງຢືນສຸຂານາໄມ ແລະສຸຂານາໄມພືດ ແມ່ນມອບໃຫ້ ຫ້ອງການກະສິກໍາ ແລະປ່າໄມ້ເມືອງ ເປັນຜູ້ລົງລາຍເຊັນ ແລ້ວແຈ້ງລາຍຊື່ຜູ້ທີ່ມີສິດ ຫຼືເຈົ້າໜ້າທີ່ທີ່ຈະລົງລາຍເຊັນ ພ້ອມທັງລາຍເຊັນແທ້ ໃຫ້ແກ່ ກົມປູກຝັງ ແລະກົມລ້ຽງສັດ ແລະການປະມົງ ຕາມຂະແໜງການສາຍຕັ້ງທີ່ຕົນຂຶ້ນກັບ.

**8. ວິທີການຈັດຕັ້ງປະຕິບັດ**

– ມອບໃຫ້ ກົມປູກຝັງ ແລະກົມລ້ຽງສັດ ແລະການປະມົງ ເປັນໃຈກາງປະສານງານກັບບັນດາກະຊວງ ແລະຂະແໜງການກ່ຽວຂ້ອງ ຂັ້ນສູນກາງ ແລະທ້ອງຖິ່ນ ເພື່ອຜັນຂະຫຍາຍ ແລະຈັດຕັ້ງປະຕິບັດຄໍາແນະນໍາສະບັບນີ້ ໃຫ້ໄດ້ຮັບຜົນດີ;

– ພາຍຫຼັງໄດ້ຮັບຄຳແນະນຳສະບັບນີ້ແລ້ວ, ໃຫ້ ພະແນກກະສິກຳ ແລະປ່າໄມ້ປະຈຳແຂວງຜົ້ງສາລີ, ຫຼວງພະບາງ, ຫົວພັນ, ຊຽງຂວາງ, ບໍລິຄຳໄຊ, ຄຳມ່ວນ, ສະຫວັນນະເຂດ, ສາລະວັນ, ເຊກອງ ແລະແຂວງອັດຕະປື ຊີ້ນຳຂະແໜງການກ່ຽວຂ້ອງ ແລະຫ້ອງການກະສິກຳ ແລະປ່າໄມ້ເມືອງ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ຈັດຕັ້ງເຜີຍແຜ່ເຊື່ອມຊຶມໃຫ້ເລິກເຊິ່ງ ພ້ອມທັງປຶກສາຫາລື, ກຳນົດເປັນໂຄງການ ແລະແຜນງານລະອຽດ ເພື່ອຈັດຕັ້ງປະຕິບັດຢ່າງມີປະສິດທິພາບ;

– ໃນການຈັດຕັ້ງປະຕິບັດ ມີຂໍ້ສະດວກ, ຫຍຸ້ງຍາກແນວໃດ ໃຫ້ຮີບຮ້ອນລາຍງານ ກະຊວງກະສິກຳ ແລະປ່າໄມ້ ເພື່ອຫາວິທີແກ້ໄຂຢ່າງທັນການ.

ດັ່ງນັ້ນ, ຈຶ່ງອອກຄຳແນະນຳສະບັບນີ້ ມາຍັງທ່ານ ເພື່ອພ້ອມກັນຈັດຕັ້ງປະຕິບັດດ້ວຍຄວາມຮັບຜິດຊອບສູງ.

ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້

<u>ບ່ອນນຳສົ່ງ:</u>

| | | |
|---|---|---|
| 1. | ກະຊວງການເງິນ | 01 ສະບັບ (ເພື່ອຊາບ); |
| 2. | ກະຊວງອຸດສາຫະກຳ ແລະ ການຄ້າ | 01 ສະບັບ (ເພື່ອຊາບ); |
| 3. | ທ່ານ ລມຕ, ຮລຕ ທ່ານລະ - | 01 ສະບັບ (ເພື່ອຊາບ); |
| 4. | ຫ້ອງການກະຊວງກະສິກຳ ແລະ ປ່າໄມ້ | 01 ສະບັບ (ເພື່ອຊາບ); |
| 5. | ກົມລ້ຽງສັດ ແລະການປະມົງ | 01 ສະບັບ (ເພື່ອຊາບ); |
| 6. | ເກັບຮັກສາໄວ້ | 01 ສະບັບ. |

ບຸນຂວາງ ຄຳບຸນເຮືອງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ໃບຄຳຮ້ອງຂໍອອກໃບຢັ້ງຢືນສຸຂານາໄມພືດ**
**ພາຍໃຕ້ສັນຍາການຄ້າຊາຍແດນ ລາວ-ຫວຽດນາມ**
**Đơn đề nghị xin cung cấp giấy xác an toàn hàng hóa trong khuôn khổ hiệp định thương mại biên giới Lào - Việt Nam**

ຮຽນ/kính gửi: ..........................................................................................

ເລື່ອງ: ຂໍອອກໃບຢັ້ງຢືນສຸຂານາໄມພືດພາຍໃຕ້ສັນຍາການຄ້າຊາຍແດນລາວ- ຫວຽດນາມ/ /Về Việc: Xin cung cấp giấy xác nhận an toàn hàng hóa trong khuôn khổ hiệp định thương mại biên giới Lào-Việt Nam.

ຂ້າພະເຈົ້າຊື່ ແລະ ນາມສະກຸນ/ Họ và tên:....................................ຖືບັດນຳໃຊ້ບັດສິດທິພິເສດພາຍໃຕ້ສັນຍາການຄ້າຊາຍແດນລາວ-ຫວຽດນາມເລກທີ/Được cấp thẻ sử dụng ưu đãi đặc biệt số: ..............ລົງວັນທີ/Ngày cấp............................., ອອກໃຫ້ທີ່/Nơi cấp:...................... ມີຈຸດປະສົງຂໍອອກໃບຢັ້ງຢືນສຸຂານາໄມພືດພາຍໃຕ້ສັນຍາການຄ້າຊາຍແດນລາວ-ຫວຽດນາມ ສຳລັບ ລາຍການສິນຄ້າ ດັ່ງລຸ່ມນີ້/Có mục đích xin cấp giấy xác nhận an toàn cho các mặt hàng được kê khai dưới đây:

| ລາຍການສິນຄ້າ/ Doanh mục hàng hóa | ລະຫັດສິນຄ້າ (ຖ້າມີ)/ Mã HS(Nếu có) | ສິນຄ້າມີແຫຼ່ງກຳເນີດມາຈາກເມືອງ/ແຂວງ ຫຼື ນະຄອນຫຼວງ Hàng hóa có xuất xứ từ huyện/tỉnh hoặc thành phố |
|---|---|---|
| | | |

ຂ້າພະເຈົ້າຂໍຢັ້ງຢືນວ່າຂໍ້ມູນຂ້າງເທິງນັ້ນແມ່ນຄວາມຈິງທຸກຢ່າງ/ Tôi xin xác nhận rằng các thông tin đã nêu trên là chính xác.

ດັ່ງນັ້ນ, ຈຶ່ງໄດ້ສະເໜີມາຍັງທ່ານພິຈາລະນາຕາມທາງຄວນດ້ວຍ/Vì vậy, Xin đề nghị đến ngài để xem xét.

ທີ່/Tại.................., ວັນທີ/Ngy.................

ຜູ້ຮ້ອງຂໍ/Người Đềnghị

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ..........................

ພະແນກກະສິກຳ ແລະ ປ່າໄມ້

ຫ້ອງການ ກະສິກຳ ແລະ ປ່າໄມ້

ເມືອງ..............................

ເລກທີ................../ຫປມ.

ວັນທີ............................

**ໃບຢັ້ງຢືນສຸຂານາໄມພືດ**

**ພາຍໃຕ້ສັນຍາການຄ້າຊາຍແດນ ລາວ-ຫວຽດນາມ**

/Giấyxácnhận an toànhànghóatrongkhuônkhổhiệpđịnhthươngmạibiêngiớiLào-Việt Nam

ຫ້ອງການກະສິກຳ ແລະ ປ່າໄມ້ເມືອງPhòng/Sở:..........................ຂໍຢັ້ງຢືນວ່າ ສິນຄ້າ ພືດ ແລະ ຜະລິດຕະພັນພືດ ທີ່ໄດ້ລະບຸຂ້າງລຸ່ມນີ້ ແມ່ນ ບໍ່ມີສັດຕູພືດຕິດແປດ ບົນພື້ນຖານຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ກ່ຽວກັບການປ້ອງກັນ ແລະ ການກັກກັກພືດ ຊຶ່ງສິນຄ້າດັ່ງກ່າວເໝາະສົມ ສຳລັບການບໍລິໂພກ/ Xác nhận rằng hàng hóa kê khai dưới đây không bệnh an toàn.

| ລຳດັບ/ TT | ລາຍການສິນຄ້າ/ Doanhmụchànghóa | ລະຫັດສິນຄ້າ/ Mã HS nếucó | ຫົວໜ່ວຍ/ Đơnvị | ຈຳນວນ/ Sốlượng | ຜົນຂອງການກວດກາ (ພົບມີ ຫຼື ບໍ່ພົບມີສັດຕູພືດ) |
|---|---|---|---|---|---|
| 1. | | | | | |
| 2. | | | | | |
| 3. | | | | | |
| 4. | | | | | |
| 5. | | | | | |

ໝາຍເຫດ: ໃບຢັ້ງຢືນນີ້ ມີອາຍຸໃຊ້ໄດ້ ບໍ່ເກີນ 07 ວັນ ນັບແຕ່ມື້ອອກໃບຢັ້ງຢືນເປັນຕົ້ນໄປ.

ເຊັນ ແລະ ປະທັບຕາ

ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ/KýtênvàĐóngdấu

**ປຶດບັນທຶກການກວດກາພືດ ແລະ ຜະລິດຕະພັນພືດ**
**ພາຍໃຕ້ສັນຍາການຄ້າຊາຍແດນ ລາວ-ຫວຽດນາມ ສໍາລັບ ເຈົ້າໜ້າທີ່, ພະນັກງານກວດກາ**
**ປະຈໍາຫ້ອງການກະສິກໍາ ແລະ ປ່າໄມ້ ເມືອງ.......................................................**

| ລໍາດັບ | ລາຍການສິນຄ້າ | ສະຖານທີເກັບ ຕົວຢ່າງສິນຄ້າ | ຈໍານວນ ຕົວຢ່າງ | ນໍ້າໜັກຕໍ່ ຕົວຢ່າງ | ຜົນການກວດກາ (ພົບ ຫຼື ບໍ່ພົບສັດຕູພືດ, ຖ້າພົບມີ ໃຫ້ບັນທຶກ ຊະນິດສັດຕູພືດ ແລະ ລັກສະນະການທໍາລາຍ ພ້ອມທັງເກັບຕົວຢ່າງໄວ້ເປັນຫຼັກຖານອ້າງອີງ) | |
|---|---|---|---|---|---|---|
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |

ທີ່..........................................., ວັນທີ.............................................

ເຈົ້າໜ້າທີ່ ຫຼື ພະນັກງານກວດກາເມືອງ

ເຈົ້າຂອງສິນຄ້າ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ໃບຄໍາຮ້ອງຂໍອອກໃບຢັ້ງຢືນສຸຂະພາບສັດ ແລະ ສຸຂານາໄມຜະລິດຕະພັນສັດ**

**ຕາມ ສັນຍາການຄ້າຊາຍແດນ ລາວ-ຫວຽດນາມ/**

**Đơn đề nghị xin cung cấp giấy xác an toàn hàng hóa trong khuôn khổ hiệp định thương mại biên giới Lào - Việt Nam**

**ຮຽນ/kính gửi: ..........................................................................................**

**ເລື່ອງ: ຂໍອອກໃບຢັ້ງຢືນສຸຂະພາບສັດ ແລະ ສຸຂານາໄມຜະລິດຕະພັນສັດຕາມສັນຍາການຄ້າຊາຍແດນລາວ-ຫວຽດນາມ/ /Về Việc: Xin cung cấp giấy xác nhận an toànhàng hóa trong khuôn khổ hiệp định thương mại biên giới Lào-Việt Nam.**

ຂ້າພະເຈົ້າຊື່ແລະ ນາມສະກຸນ/ Họ và tên:........................................ ຖືບັດນໍາໃຊ້ບັດສິດທິພິເສດຕາມສັນຍາການຄ້າຊາຍແດນລາວ-ຫວຽດນາມເລກທີ/Được cấp thẻ sử dụng ưu đãi đặc biệt số:..................ລົງວັນທີ/Ngày cấp............................., ອອກໃຫ້ທີ່/Nơi cấp:..................... ມີຈຸດປະສົງຂໍອອກໃບຢັ້ງຢືນສຸຂະພາບສັດແລະສຸຂານາໄມຜະລິດຕະພັນສັດສໍາລັບລາຍການສິນຄ້າ ດັ່ງລຸ່ມນີ້/Có mục đích xin cấp giấy xác nhận an toàn cho các mặt hàng được kê khai dưới đây:

| ຊື່ລາຍການສິນຄ້າ/<br>**Doanh mục hàng hóa** | ລະຫັດສິນຄ້າ (ຖ້າມີ)/<br>**Mã HS(Nếu có)** | ສິນຄ້າມີແຫຼ່ງກໍາເນີດມາຈາກເມືອງ/ແຂວງຫຼືນະຄອນຫຼວງ **Hàng hóa có xuất xứ từ huyện/tỉnhhoặc thành phố** |
|---|---|---|
| | | |

ຂ້າພະເຈົ້າຂໍຢັ້ງຢືນວ່າຂໍ້ມູນຂ້າງເທິງນັ້ນແມ່ນຄວາມຈິງທຸກຢ່າງ/ Tôi xin xác nhận rằng các thông tin đã nêu trên là chính xác.

ດັ່ງນັ້ນ, ຈຶ່ງໄດ້ສະເໜີມາຍັງທ່ານພິຈາລະນາຕາມທາງຄວນດ້ວຍ./Vì vậy, Xin đề nghị đến ngài để xem xét.

ທີ່/Tại.................., ວັນທີ/Ngy.................

ຜູ້ຮ້ອງຂໍ/Người Đềnghị

ສາທາລະນະລັດປະຊາທິປະໄຕປະຊາຊົນລາວ

ສັນຕິພາບເອກະລາດປະຊາທິປະໄຕເອກະພາບວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ພະແນກ/ຫ້ອງການ ກະສິກຳ ແລະປ່າໄມ້ ເລກທີ

**ໃບຢັ້ງຢືນສຸຂະພາບສັດແລະສຸຂານາໄມຜະລິດຕະພັນສັດ**

**ຕາມສັນຍາການຄ້າຊາຍແດນ ລາວ-ຫວຽດນາມ**

**/Giấy xác nhận an toàn hàng hóatrong khuôn khổ hiệp định thương mại biên giới Lào-Việt Nam.**

ຫ້ອງການ ກະສິກຳ ແລະ ປ່າໄມ້ເມືອງ /ພະແນກກະສິກຳ ແລະ ປ່າໄມ້ແຂວງ /Phòng/Sở:............................

ຂໍຢັ້ງຢືນວ່າ ສິນຄ້າ (ສັດ ແລະ ຜະລິດຕະພັນສັດ)ທີ່ໄດ້ລະບຸຢູ່ຂ້າງລຸ່ມນີ້ ມີສຸຂະພາບແຂງແຮງ ແລະ ບໍ່ເປັນພະຍາດຕິດແປດຮ້າຍແຮງ ຊຶ່ງເໝາະສົມແກ່ການນຳໄປບໍລິໂພກ/ Xác nhận rằng hàng hóa kê khai dưới đây không bệnh an toàn.

| ລຳດັບ/ **TT** | ຊື່ລາຍການສິນຄ້າ/ **Doanh mục hàng hóa** | ລະຫັດສິນຄ້າ/ **Mã HS nếu có** | ຫົວໜ່ວຍ/ **Đơn vị** | ຈຳນວນ/ **Số lượng** | ຜົນຂອງການກວດກາ |
|---|---|---|---|---|---|
| 1 | ໝູລາດ ນ້ຳໜັກ 68 ກິໂລ | ........ | ໂຕ | 20 | ມີສຸຂະພາບແຂງແຮງ ແລະບໍ່ເປັນພະຍາດຕິດແປດຮ້າຍແຮງ |

ໝາຍເຫດ: ຖ້າເປັນການຢັ້ງຢືນສັດມີຊີວິດ ໃບຢັ້ງຢືນນີ້ ມີອາຍຸໃຊ້ໄດ້ ບໍ່ເກີນ 7ວັນ ນັບແຕ່ມື້ອອກ ໃບຢັ້ງຢືນເປັນຕົ້ນໄປ ແລະ ຖ້າເປັນການຢັ້ງຢືນຜະລິດຕະພັນສິນຄ້າ ໃບຢັ້ງຢືນນີ້ ມີອາຍຸໃຊ້ໄດ້ບໍ່ເກີນ 15 ວັນ ນັບແຕ່ມື້ອອກໃບຢັ້ງຢືນເປັນຕົ້ນໄປ.

ເຊັນ ແລະ ປະທັບຕາ /Ký tên và Đóng dấu

ພະແນກ/ຫ້ອງການ ກະສິກຳ ແລະປ່າໄມ້